Souphanouvong University Journal of Multidisciplinary Research and Development
2026, Vol. 12, 04F, 37-44
https://doi.org/10.69692/SUJMRD1204F37

Factors Fffecting the Production of Weaving Handicrafts as a Commodity by the People of Samkang Village, Beng District, Oudomxay Province

Souksavanh VONGLOM[1], Bounthavy SIPHANTHONG[2], Soutthavone SIOUDOMPHAN[2]
Business Management Department, Faculty of Economic and Tourism, Souphanouvong University

[1] ***Correspondence**: Souksavanh VONGLOM, Beng District Organizational Committee, Oudomxay Province Tel: 020 28240506; E-mail:* nouyvongsavath@gmail.com
[2]*Faculty of Economic and Tourism, Souphanouvong University*

Article Info:
Submitted: October 15, 2026
Revised: October 19, 2026
Accepted: October 20, 2026

Abstract

This study aims to examine 1) the status of handicraft production for commercial purposes; 2) the importance of various factors that influence the decision to produce handicrafts for commercial purposes; and 3) the specific factors affecting the decision to produce handicrafts for commercial purposes among the people of Sam Kang Village, Beng District, Oudomxay Province. The study used a quantitative research method, targeting the people of Sam Kang Village, Beng District, Oudomxay Province, and utilized a questionnaire for data collection. Basic statistics were used to calculate percentages, frequency distributions, mean values, and standard deviations, while inferential statistics analyzed the relationship values by modeling the multiple regression equation with the Ordinary Least Square (OLS) method.

The results of the research found that: Traditional weaving in Beng District, Oudomxay Province, has been produced for a long time, but it is mainly produced to meet the needs of local consumers and tourists; Traditional textiles are products made from cotton; they are traditional handicrafts with unique patterns and are popular with both Lao and foreign buyers to be sewn into finished garments and then modified into other items, such as curtains, tablecloths, scarves, placemats, home decoration items, etc. Producers can distribute directly to local consumers, Lao and foreign tourists, or distribute to middlemen; the production is a family industry that is widespread. The factors influencing the decision to produce handicrafts for the people of Sam Kang Village, Beng District, Oudomxay Province are expected to include personal characteristics, production potential, economic factors, social factors, policy factors, and technical factors, which are statistically significant at the 0.1, 0.05, and 0.01 levels.

Keywords: Factors influencing, production, weaving craft

1. ພາກສະເໜີ

ການຂັບເຄື່ອນການພັດທະນາເສດຖະກິດພື້ນຖານ ເປັນການດຳເນີນການທີ່ສຳຄັນໃນການພັດທະນາ ແລະ ຍົກລະດັບປະເທດໃຫ້ເປັນປະເທດທີ່ມີລາຍໄດ້ສູງ, ມີການກະຈາຍລະລາຍໄດ້ຢ່າງທົ່ວເຖິງ, ເປັນການວາງຮາກຖານທີ່ມັ້ນຄົງໃຫ້ກັບເສດຖະກິດໃນອະນາຄົດ ໂດຍການສົ່ງເສີມເສດຖະກິດລະດັບທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ, ມີຄວາມສາມາດໃນການແຂ່ງຂັນ ແລະ ສາມາດເພິ່ງພາຕົນເອງໄດ້ ເຊິ່ງຈະຊ່ວຍກໍ່ໃຫ້ເກີດລະດັບມາດຕະຖານການຄອງຊີບ ແລະ ການດຳລົງຊີວິດຂອງປະຊາຊົນໃນທ້ອງຖິ່ນໃຫ້ດີຂຶ້ນ ແລະ ນຳໄປສູ່ການແກ້ໄຂບັນຫາຄວາມທຸກຍາກ, ການເຫຼື່ອມລ້ຳ ແລະ ຄວາມບໍ່ສະເໝີພາບຕາມເປົ້າໝາຍຂອງຍຸດທະສາດການພັດທະນາປະເທດ ໂດຍສະເພາະການສ້າງໂອກາດ ແລະ ຄວາມສະເໝີພາບທາງດ້ານສັງຄົມ ເພື່ອໃຫ້ທຸກຄົນໄດ້ຮັບຜົນປະໂຫຍດຈາກການພັດທະນາຢ່າງທົ່ວເຖິງ ແລະ ເປັນທຳ ຜ່ານການປັບໂຄງສ້າງທາງເສດຖະກິດ ແລະ ພຶດຕິກຳ ແລະ ດ້ານການສ້າງຄວາມສາມາດໃນການແຂ່ງຂັນ ໂດຍການພັດທະນາ ແລະ ສົ່ງເສີມການສ້າງມູນຄ່າສິນຄ້າຫັດຖະກຳ ເພື່ອສ້າງລາຍໄດ້ຂອງປະຊາຊົນໃນການເພິ່ງພາຕົນເອງ (Phanak, 2023).

ຜະລິດຕະພັນທ້ອງຖິ່ນ ຫຼື ເປັນທີ່ຮູ້ຈັກກັນໃນອີກຊື່ໜຶ່ງວ່າ ໜຶ່ງເມືອງໜຶ່ງຜະລິດຕະພັນ ເປັນຜະລິດຕະພັນຈາກຜຸມປັນຍາທ້ອງຖິ່ນ ເປັນຜະລິດຕະພັນທີ່ສ້າງຈາກຄວາມຮູ້, ຄວາມຄິດ, ຄວາມເຊື່ອ ແລະ ຄວາມສາມາດຂອງຄົນໃນທ້ອງຖິ່ນທີ່ໄດ້ຈາກປະສົບການທີ່ສັ່ງສອນກັນມາໃນທ້ອງຖິ່ນ ແລະ ມີການສືບທອດປະຍຸກໃຊ້ກັນຢ່າງຕໍ່ເນື່ອງ (Na-Thalang, 1998) ແລະ ຈັດເປັນຜະລິດຕະພັນທາງວັດທະນະທຳ ເນື່ອງຈາກເປັນຜະລິດຕະພັນທີ່ປະຊາຊົນໃນທ້ອງຖິ່ນໄດ້ຮ່ວມກັນສ້າງຂຶ້ນມາຈາກຄວາມເຊື່ອ, ຄ່ານິຍົມ, ການຮຽນຮູ້, ຄວາມເຊື່ອທາງສິລະປະ, ສິນລະທຳ, ກົດໝາຍ, ປະເພນີ ແລະ ສືບທອດກັນມາຈາກຮຸ່ນຕໍ່ຮຸ່ນ (Wasi, 2000). ດັ່ງນັ້ນ ຜະລິດຕະພັນທາງວັດທະນະທຳຈຶ່ງມີຕົ້ນທຶນທາງວັດທະນະທຳ ເຊິ່ງໄດ້ແກ່: ເອກະລັກສະເພາະຕົວທີ່ບໍ່ຊ້ຳກັນ ຄູ່ຄວນແກ່ການອານຸລັກ ແລະ ພັດທະນາໃຫ້ດຳລົງຄວາມສຳຄັນຕໍ່ທ້ອງຖິ່ນ ແລະ ເປັນມໍລະດົກຂອງປະເທດທີ່ບັນພະບຸລຸດຂອງແຕ່ລະທ້ອງຖິ່ນໄດ້ສ້າງສົມມາຍາວນານ (Rojanaporntip, 2005). ການຕ່ຳແຜ່ນພື້ນເມືອງທີ່ດຳເນີນການຕ່ຳໂດຍຊາວບ້ານ ຜະລິດດ້ວຍວັດຖຸດິບທີ່ມີຢູ່ໃນທ້ອງຖິ່ນ ແລະ ໃຊ້ເຄື່ອງມືການຕ່ຳແບບດັ້ງເດີມນັ້ນ ຈັດເປັນໜຶ່ງໃນຜະລິດຕະພັນທີ່ເກີດຈາກຜຸມປັນຍາທ້ອງຖິ່ນ ແລະ ເປັນສິນຄ້າທາງວັດທະນະທຳ (Nana, 2011); ຕ່ຳແຜ່ນພື້ນເມືອງໃນແຕ່ລະພື້ນທີ່ມີ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ເອກະລັກທີ່ໂດດເດັ່ນ ແລະ ມີລວດລາຍຜ້າທີ່ແຕກຕ່າງກັນ ແລະ ເປັນລວດລາຍທີ່ສືບທອດກັນມາແຕ່ບູຮານ ເຊິ່ງລວດລາຍບົນຜືນຜ້າເຫຼົ່ານັ້ນ ຈະຖືກພັດທະນາໃຫ້ເປັນຜະລິດຕະພັນທີ່ ເໝາະກັບຍຸກສະໄໝ (Piamsuwannakit, 2024). ດັ່ງນັ້ນ ຜະລິຕະພັນຕໍ່າແຜ່ນພື້ນເມືອງເຫຼົ່ານັ້ນຈຶ່ງມີຮາກເຫງົ້າມາຈາກວັດທະນະທຳທີ່ມີຄວາມແຕກຕ່າງກັນໃນແຕ່ລະພື້ນທີ່ ແລະ ມີເອກະລັກ ແລະ ລວດລາຍສະເພາະຂອງແຕ່ລະທ້ອງຖິ່ນ (Chemsripong & Petmee, 2017).

ການຕໍ່າແຜ່ນໃນເມືອງແບງ ແຂວງອຸດົມໄຊ ມີການຜະລິດມາດົນນານແລ້ວ ແຕ່ເປັນການຜະລິດເພື່ອສະໜອງຄວາມຕ້ອງການຂອງຜູ້ບໍລິໂພກໃນທ້ອງຖິ່ນ ແລະ ນັກທ່ອງທ່ຽວເປັນສຳຄັນ; ແຜ່ນແພພື້ນເມືອງເປັນຜະລິດຕະພັນທີ່ປະດິດມາຈາກຝ້າຍ, ເປັນສິນຄ້າຫັດຖະກຳພື້ນເມືອງທີ່ມີເອກະລັກສະເພາະຕົວຕາມແບບ ແລະ ລວດລາຍ ຈຶ່ງເປັນທີ່ນິຍົມຂອງຜູ້ຊື້ທັງຄົນລາວ ແລະ ຕ່າງປະເທດ ເພື່ອທີ່ຈະນຳໄປຕັດຫຍິບເປັນເຄື່ອງແຕ່ງກາຍສຳເລັດຮູບ ຕະຫຼອດຈົນດັດແປງເປັນເຄື່ອງໃຊ້ອື່ນໆ ເຊັ່ນ: ຜ້າກັ້ງ, ຜ້າປູໂຕະ, ຜ້າພັນຄໍ, ຜ້າຮອງຈານ, ອຸປະກອນຕົກແຕ່ງພາຍໃນເຮືອນ ເປັນຕົ້ນ. ຜູ້ຜະລິດສາມາດຈັດຈຳໜ່າຍໂດຍກົງແກ່ຜູ້ບໍລິໂພກທັງທີ່ເປັນຄົນພາຍໃນທ້ອງຖິ່ນ, ນັກທ່ອງທ່ຽວທັງຄົນລາວ ແລະ ຄົນຕ່າງປະເທດທີ່ມາທ່ຽວຊົມ ຫຼື ຈັດຈຳໜ່າຍແກ່ພໍ່ຄ້າຄົນກາງ; ລັກສະນະການຜະລິດຈະເປັນອຸດສາຫະກຳໃນຄອບຄົວ ແລະ ມີກະຈາຍຢູ່ທົ່ວໄປ. ການຕໍ່າແຜ່ນ ຈຶ່ງນັບວ່າເປັນທຸລະກິດທ້ອງຖິ່ນ ທີ່ໜ້າສົນໃຈ ແລະ ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ ແລະ ສັງຄົມຂອງພາກເໜືອ ໂດຍສະເພາະເມືອງແບງ ແຂວງອຸດົມໄຊ ເພາະເຮັດໃຫ້ເກີດການຈ້າງງານຈຳນວນຫຼາຍ ແລະ ເປັນການກະຈາຍລາຍໄດ້ໄປສູ່ຊົນນະບົດ, ຊ່ວຍໃຫ້ປະຊາຊົນໃນທ້ອງຖິ່ນມີວຽກເຮັດງານທຳ ແລະ ມີລາຍໄດ້ເພີ່ມ, ລຸດຜ່ອນການຫວ່າງງານແອບແຝງ, ຊ່ວຍໃຫ້ຊີວິດການເປັນຢູ່ດີຂຶ້ນ. ນອກຈາກນັ້ນ ຍັງສົ່ງຜົນດີທັງທາງກົງ ແລະ ທາງອ້ອມຕໍ່ບັນຫາການເຄື່ອນຍ້າຍແຮງງານຈາກຊົນນະບົດສູ່ຕົວເມືອງອີກດ້ວຍ (Industry and Commerce department, 2025). ນອກຈາກນີ້ ເມືອງແບງ ມີຄວາມອຸດົມສົມບູນທາງດ້ານຊະນິດພັນຂອງຝ້າຍ ແລະ ເຄື່ອງປ່າຂອງດົງ. ດອກຝ້າຍແມ່ນຖືກນຳໃຊ້ເປັນວັດຖຸໃນຜະລິດ ແລະ ແປຮູບເປັນຜະລິດຕະພັນເຄື່ອງຫັດຖະກຳ, ສິ່ງຂອງເຄື່ອງໃຊ້ໃນຄອບຄົວ. ຫັດຖະກຳຝ້າຍ ໄດ້ພັດທະນາເປັນແຜ່ນແພ, ເສື້ອຜ້າ, ແພພັນຄໍ ແລະ ອື່ນໆ. ເຄື່ອງປ່າຂອງດົງໄດ້ຖືກນຳໃຊ້ເປັນອາຫານ, ເປັນຢາພື້ນເມືອງ, ເປັນແຫຼ່ງສ້າງລາຍຮັບໃຫ້ທ້ອງຖິ່ນ. ຖືວ່າຝ້າຍ ມີບົດບາດສຳຄັນ ແລະ ຕິດພັນກັບວິຖີການດຳລົງຊີວິດ, ວັດທະນະທຳຂອງປະຊາຊົນບ້ານສາມກາງ ມາເປັນເວລາຍາວນານ ແລະ ຝ້າຍຖືກເອີ້ນວ່າ “ຄຳຂາວ”. ນັບແຕ່ປີ 2013 ເປັນຕົ້ນມາ ສູນພັດທະນາຜະລິດຕະພັນ ແລະ ສົ່ງເສີມການຕະຫຼາດແຂວງອຸດົມໄຊ ໄດ້ເຂົ້າໄປສົ່ງເສີມ ແລະ ສ້າງຕັ້ງກຸ່ມຜະລິດແຜ່ນແພພື້ນເມືອງ ບ້ານສາມກາງ; ຈຸດປະສົງເພື່ອສ້າງວຽກເຮັດ ແລະ ສ້າງລາຍຮັບໃຫ້ປະຊາຊົນ ໂດຍການຜະລິດເພື່ອສົ່ງຂາຍໃຫ້ບໍລິສັດໂອໂຕສະຫຍາມຊຽງໃໝ່ (ປະເທດໄທ) ແລະ ສົ່ງຂາຍຕາມທ້ອງຕະຫຼາດຢຸ່ເຂດບ້ານທີ່ມີການລົງຕະຫຼາດນັດເຄື່ອນທີ່ພາຍໃນ ແລະ ມີການຝຶກອົບຮົມທາງການຍ້ອມສີ ແລະ ການຊ່ວຍເຫຼືອຈາກພະແນກອຸດສາຫະກຳ ແລະ ການຄ້າ (Industry and Commerce Office, 2025).

ຈາກບັນຫາດັ່ງກ່າວ ຜູ້ສຶກສາຈຶ່ງເຫັນໄດ້ຄວາມສຳຄັນໃນການພັດທະນາສິ່ງເສີມການຜະລິດຫັດຖະກຳຕໍ່າແຜ່ນເພື່ອເພີ່ມມູນຄ່າໃຫ້ກັບທ້ອງຖິ່ນ ແລະ ຍັງສາມາດສ້າງຄວາມເຂັ້ມແຂງທາງການຕະຫຼາດ ລວມທັງສ້າງຄວາມຍັ່ງຍືນທາງເສດຖະກິດ. ນອກຈາກນີ້ ຍັງສາມາດລວບລວມຂໍ້ມູນກ່ຽວກັບການຕໍ່າແຜ່ນ ແລະ ພັດທະນາຜະລິດຕະພັນແຜ່ນແພເພື່ອສ້າງເປັນອາຊີບ ແລະ ລາຍໄດ້ໃຫ້ກັບທ້ອງຖິ່ນ ເຊິ່ງຂໍ້ມູນທີ່ໄດ້ຈະສາມາດຊ່ວຍໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງພາກລັດ ແລະ ປະຊາຊົນຜູ້ທຳການຜະລິດຫັດຖະກຳເພື່ອໃຊ້ເປັນແນວທາງໃນການຊຸກຍູ້ສົ່ງເສີມການສ້າງເສດຖະກິດດ້ວຍການຜະລິດຫັດຖະກຳຕໍ່າແຜ່ນເປັນສິນຄ້າໃນຂັ້ນຕໍ່ໄປໃຫ້ໄດ້ຫຼາຍບ້ານ, ຫຼາຍເມືອງ ແລະ ຫຼາກຫຼາຍກິດຈະກຳເພື່ອສ້າງລາຍຮັບໃຫ້ແກ່ປະຊາຊົນ. ດັ່ງນັ້ນ, ການສຶກສາຄົ້ນຄວ້າໃນຄັ້ງນີ້ຈຶ່ງຈຸດປະສົງເພື່ອສຶກສາສະພາບການຜະລິດຫັດຖະກຳຕໍ່າແຜ່ນເພື່ອເປັນສິນຄ້າຂອງປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ແລະ ສຶກສາ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຜະລິດຫັດຖະກຳຕໍ່າແຜ່ນເພື່ອເປັນສິນຄ້າຂອງປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ.

2. ອຸປະກອນ ແລະ ວິທີການ

2.1 ກຸ່ມຕົວຢ່າງ

ການຄົ້ນຄວ້ານີ້ ໄດ້ກຳນົດເອົາກຸ່ມປະຊາກອນເປັນປະຊາຊົນຜູ້ທີ່ໄດ້ມີການຜະລິດຫັດຖະກຳຕໍ່າແຜ່ນເປັນສິນຄ້າ ພາຍໃນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ຈຳນວນ 301 ຄອບຄົວ ເຊິ່ງສາມາດຄິດໄລ່ກຸ່ມຕົວຢ່າງ ຕາມວິທີຂອງ Yamane (1973) ໄດ້ກຸ່ມຕົວຢ່າງ ຈຳນວນ 172 ຄອບຄົວ

2.2 ເຄື່ອງມືທີ່ໃຊ້ໃນການວິໄຈ

ການຄົ້ນຄວ້ານີ້ ໄດ້ນຳໃຊ້ວິທີການສຶກສາແບບປະລິມານ ໂດຍນຳໃຊ້ໃຊ້ແບບສອບຖາມທີ່ມີລັກສະນະປາຍປິດ ໂດຍໄດ້ນຳເອົາທິດສະດີປັດໄຈໃນການດຳເນີນວິສາຫະກິດ (SMEs) ຂອງ Lumpkin and Taylor (2005) ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງຂອງ Siritho (2016) ແລະ Sakda. (2016) ມາກຳນົດຂອບແນວຄວາມຄິດເພື່ອສ້າງເຄື່ອງມື ຫຼື ແບບສອບຖາມທີ່ໃຊ້ໃນການເກັບກຳຂໍ້ມູນ ເຊິ່ງກຳນົດເປັນຄຳຖາມປາຍປິດ ຫຼື ເປັນ Choice ໃຫ້ເລືອກ ໂດຍແບ່ງອອກເປັນ 3 ສ່ວນ ຄື: ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ຫຼື ຜູ້ປະກອບການວິສາຫະກິດ, ຂໍ້ມູນກ່ຽວກັບການດຳເນີນກິດຈະການ ແລະ ຂໍ້ມູນກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຂອງຜູ້ປະກອບວິສາຫະກິດ SMEs.

2.3 ການເກັບລວມລວມຂໍ້ມູນ

ໃນການເກັບກຳ ແລະ ລວບລວມຂໍ້ມູນ ຜູ້ສຶກສາໄດ້ມີການລົງເກັບກຳຂໍ້ມູນຕົວຈິງຈາກປະຊາຊົນຜູ້ທີ່ໄດ້ມີການຜະລິດຫັດຖະກຳຕໍ່າແຜ່ນເປັນສິນຄ້າ ພາຍໃນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ໃນໄລຍະແຕ່ເດືອນກໍລະກົດ ຫາ ເດືອນສິງຫາ 2026. ພ້ອມທັງໄດ້ອະທິບາຍລາຍລະອຽດກ່ຽວກັບແຕ່ລະຂໍ້ຄຳຖາມໃນແບບສອບຖາມເພື່ອໃຫ້ຜູ້ຕອບແບບສອບຖາມມີຄວາມເຂົ້າໃຈ ແລະ ໃຫ້ຂໍ້ມູນໄດ້ຖືກຕ້ອງຕາມຈຸດປະສົງທີ່ຕ້ອງການ; ຫຼັງຈາກນັ້ນຜູ້ສຶກສາໄດ້ແຈກຢາຍແບບສອບຖາມໃຫ້ກັບປະຊາຊົນຜູ້ທີ່ມີການຜະລິດຫັດຖະກຳຕໍ່າແຜ່ນ ແລະ ພາຍຫຼັງສຳເລັດແລ້ວໄດ້ເກັບຄືນແບບສອບຖາມໄດ້ 100%.

2.4 ການວິເຄາະຂໍ້ມູນ

ພາຍຫຼັງເກັບກຳຂໍ້ມູນໄດ້ສຳເລັດແລ້ວ ແມ່ນໄດ້ນຳມາວິເຄາະ ໂດຍ ຜ່ານໂປຼແກຼມວິເຄາະຂໍ້ມູນທາງສະຖິຕິ (SPSS Version 27) ເພື່ອຫາຄ່າຄວາມຖີ່ ແລະ ຊອກຫາຄ່າສ່ວນຮ້ອຍ (%) ໂດຍນຳສະເໜີ ເປັນຕາຕະລາງສຳລັບມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ຂໍ້ມູນ ການຜະລິດຫັດຖະກຳຕ່ຳແຜ່ນ ແລະ ຈັດຈຳໜ່າຍ ແລະ ໄດ້ນຳໃຊ້ການ ວິເຄາະແບບຈຳລອງສົມຜົນຖົດຖອຍພະຫຸຄູນ (Mutiple Regression Linear Model) ດ້ວຍວິທີກຳລັງສອງນ້ອຍສຸດ (Least square method) ເປັນເຄື່ອງມືໃນການວິເຄາະ ແລະ ອະທິບາຍປັດໄຈທີ່ມີຜົນຕໍ່ ການຕັດສິນໃຈເລືອກຜະລິດຫັດຖະກຳຕ່ຳແຜ່ນເປັນສິນຄ້າຂອງ ປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ. ໂດຍມີແບບຈຳ ລອງທາງເສດຖະມິຕິ ດັ່ງນີ້:

$$Y_i = \beta_0 + \beta_1 X_1 + \beta_2 X_2 + \beta_3 X_3 + \beta_4 X_4 + \beta_5 X_5 + \beta_6 X_6 + \beta_7 X_7 + \beta_8 X_8 + \beta_9 X_9 + \beta_{10} X_{10} + \beta_{11} X_{11} + \beta_{12} X_{12} + \beta_{13} X_{13} + \beta_{14} X_{14} + \varepsilon_i$$

β_0 ໝາຍເຖິງສຳປະສິດຄົງຄ່າ

$\beta_1 \dots \beta_{21}$ ໝາຍເຖິງສຳປະສິດການຖົດຖອຍ

ເຊິ່ງໃນການປະມານຄ່າສຳປະສິດຂອງຕົວປ່ຽນອິດສະຫຼະແຕ່ລະ ປັດໄຈ ($\beta_0, \beta_1, \beta_2, \dots, \beta_{21}$) ຈະປະມານໂດຍໃຊ້ດ້ວຍວິທີ ກຳລັງ ສອງນ້ອຍສຸດ (Least square method). ໂດຍທີ່: ຕົວປ່ຽນອິດສະຫຼະ ສາມາດກຳນົດໃນຮູບແບບສັນຍາລັກ (X) ດັ່ງລຸ່ມນີ້:

ຕາຕະລາງ 1: ບັນດາຕົວປ່ຽນອິດສະຫຼະ

ລ/ດ	ຕົວປ່ຽນປັດໄຈ	ສັນຍາ ລັກ	ຫົວໜ່ວຍ ການວັດ	ທີ່ມາ
1	ລະດັບການສຶກສາ	X_1	nominal	Soulinthongtheng et al (2025)
2	ຈຳນວນສະມາຊິກທີ່ເປັນເພດຍິງໃນຄອບຄົວ	X_2	Scale	Soulinthongtheng et al (2025)
3	ຈຳນວນສະມາຊິກຜູ້ເພິ່ງພາໃນຄອບຄົວ	X_3	Scale	Soulinthongtheng et al (2025)
4	ຈຳນວນສະມາຊິກທີ່ສາມາດປະກອບອາຊີບ	X_4	Scale	Soulinthongtheng et al (2025)
5	ລາຍໄດ້ຈາກການຜະລິດຫັດຖະກຳ	X_5	Scale	Jaisit & Chalermphol (2021)
6	ລາຍໄດ້ຈາກແຫຼ່ງອື່ນໆ	X_6	Scale	Jaisit & Chalermphol (2021)
7	ລາຍຈ່າຍຂອງຄອບຄົວ	X_7	Scale	Jaisit & Chalermphol (2021)
8	ການອອມ	X_8	Scale	Jaisit & Chalermphol (2021)
9	ໜີ້ສິນຂອງຄອບຄົວ	X_9	Scale	Jaisit & Chalermphol (2021)
10	ຈຳນວນວັນທີ່ໃຊ້ໃນການຕ່ຳແຜ່ນ	X_{10}	Scale	Palatorn (2019)
11	ປັດໄຈດ້ານທ່າແຮງການຜະລິດ	X_{11}	Ordinal	Soulinthongtheng et al (2025)
12	ປັດໄຈດ້ານເສດຖະກິດ	X_{12}	Ordinal	Palatorn (2019)
13	ປັດໄຈດ້ານສັງຄົມ	X_{13}	Ordinal	Palatorn (2019)
14	ປັດໄຈດ້ານນະໂຍບາຍ	X_{14}	Ordinal	Palatorn (2019)
15	ປັດໄຈດ້ານເທັກນິກ	X_{15}	Ordinal	Palatorn (2019)

3. ຜົນໄດ້ຮັບ

ຜົນການສຶກສາຂໍ້ມູນການຜະລິດຫັດຖະກຳຕ່ຳແຜ່ນເພື່ອເປັນ ສິນຄ້າຂອງປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ພົບວ່າ ຜູ້ຕອບແບບສອບຖາມເປັນເພດຍິງ ຈຳນວນ 104 ຄົນ ກວມເອົາ 60.42% ແລະ ເພດຊາຍ ຈຳນວນ 68 ຄົນ ກວມເອົາ 39.53%; ສ່ວນ ໃຫຍ່ມີອາຍຸຢູ່ລະຫວ່າງ 30 – 39 ປີ ມີ 79 ຄົນ ກວມເອົາ 45.80%, ຮອງລົງມາແມ່ນມີອາຍຸຢູ່ລະຫວ່າງ 40 – 49 ປີ ມີ 65 ຄົນ ກວມເອົາ 37.50%; ສ່ວນຫຼາຍມີສະຖານະພາບທີ່ແຕ່ງງານແລ້ວກວມເອົາ 87.50 ແລະ ມີລະດັບການສຶກສາຈົບປະລິນຍາຕີເປັນສ່ວນຫຼາຍ ກວມເອົາ 39.58%, ຮອງລົງມາແມ່ນຈົບມັດທະຍົມ ກວມເອົາ 31.25%; ເຊິ່ງມີ ອາຊີບຫຼັກເປັນພະນັກງານລັດ ກວມເອົາ 52.08%, ຮອງລົງມາແມ່ນມີ ອາຊີບເປັນຊາວກະສິກອນ ແລະ ຜະລິດຫັດຖະກຳ ກວມເອົາ 22.92% ເທົ່າກັນ. ມີຈຳນວນສະມາຊິກໃນຄອບຄົວ ໂດຍສະເລ່ຍ 5 ຄົນ ໃນ ນັ້ນຈຳນວນສະມາຊິກທີ່ເປັນເພດຍິງ ໂດຍສະເລ່ຍ 3 ຄົນ; ຈຳນວນ ສະມາຊິກໃນຄອບຄົວ ທີ່ສາມາດປະກອບອາຊີບ ໂດຍສະເລ່ຍ 3 ຄົນ ໃນນັ້ນຈຳນວນສະມາຊິກທີ່ເປັນເພດຍິງ ໂດຍສະເລ່ຍ 2 ຄົນ. ລາຍໄດ້ ສະເລ່ຍຕໍ່ເດືອນຂອງຄອບຄົວ ຫຼາຍກວ່າ 9,000,000 ກີບ ມີ 100 ຄອບຄົວ ກວມເອົາ 58.33%, ຮອງລົງມາແມ່ນ ຢູ່ລະຫວ່າງ 3,000,000 – 5,000,000 ກີບ ມີ 39 ຄອບຄົວ ກວມເອົາ 22.92%, ລາຍຈ່າຍສະເລ່ຍຕໍ່ເດືອນຂອງຄອບຄົວ ຫຼາຍກວ່າ 9,000,000 ກີບ ມີ 54 ຄອບຄົວ ກວມເອົາ 31.25%, ຮອງລົງມາແມ່ນ ຢູ່ລະຫວ່າງ 3,000,000 – 5,000,000 ກີບ ມີ 43 ຄອບຄົວ ກວມເອົາ 25.00%; ເງິນອອມສະເລ່ຍຕໍ່ເດືອນຂອງຄອບຄົວ ແມ່ນໜ້ອຍກວ່າ 1,000,000 ກີບ ມີ 61 ຄອບຄົວ ກວມເອົາ 35.42%, ຮອງລົງມາແມ່ນຢູ່ລະຫວ່າງ 1,000,000 – 2,000,000 ກີບ ມີ 39 ຄອບຄົວ ກວມເອົາ 35.42%.

ການຜະລິດຫັດຖະກຳຕ່ຳແຜ່ນຂອງຄອບຄົວ ໂດຍສ່ວນໃຫຍ່ ແມ່ນຜະລິດເປັນອາຊີບເສີມ ມີຈຳນວນ 122 ຄອບຄົວ ກວມເອົາ 70.83% ແລະ ຜະລິດເປັນອາຊີບຫຼັກ ມີຈຳນວນ 50 ຄອບຄົວ ກວມ ເອົາ 29.17% ; ເຊິ່ງມີປະສົບການໃນການຜະລິດໂດຍສະເລ່ຍຢູ່ ລະຫວ່າງ 5-6 ປີ; ການຮຽນຮູ້ວິທີການໃນການຜະລິດຫັດຖະກຳຕ່ຳ ແຜ່ນຂອງຄອບຄົວ ໂດຍສ່ວນໃຫຍ່ແມ່ນສືບທອດມາຈາກບັນພະບຸລຸດ ມີຈຳນວນ 140 ຄອບຄົວ ຄິດເປັນ 43.82% ແລະ ກວມເອົາ 81.25%

ຂອງຈຳນວນກຸ່ມຕົວຢ່າງທັງໝົດ; ຮອງລົງມາແມ່ນ ຈາກຍາດພີ່ນ້ອງ ມີຈຳນວນ 57 ຄອບຄົວ ຄິດເປັນ 17.98 ແລະ ກວມເອົາ 33.33% ຂອງຈຳນວນກຸ່ມຕົວຢ່າງທັງໝົດ ແລະ ຈາກການຝຶກອົບຮົມຂອງໂຄງການ ມີຈຳນວນ 43 ຄອບຄົວ ຄິດເປັນ 13.48% ແລະ ກວມເອົາ 25.00% ຂອງຈຳນວນກຸ່ມຕົວຢ່າງທັງໝົດ; ສຳລັບການອອກແບບ ຫຼື ລວດລາຍຂອງແຜ່ນແຜ ແມ່ນສືບທອດມາຈາກບັນພະບຸລຸດ ເຊິ່ງມີຈຳນວນ 86 ຄອບຄົວ ກວມເອົາ 50.00%, ຮອງລົງມາແມ່ນຕາມການແນະນຳ ຫຼື ສັ່ງຊື້ຂອງລູກຄ້າ ມີຈຳນວນ 57 ຄອບຄົວ ກວມເອົາ 33.33% ແລະ ຄົ້ນຄິດຂຶ້ນມາໃໝ່ດ້ວຍຕົນເອງ ມີຈຳນວນ 29 ຄອບຄົວ ກວມເອົາ 16.67% ຕາມລຳດັບ. ສຳລັບປະເພດຂອງຜະລິດຕະພັນ ຈາກການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊຸມປະກອບດ້ວຍ: ແພເສື້ອ, ແພຝ້າຍທົ່ວໄປ, ແພສິ້ນ, ຜ້າພັນຄໍ, ຜ້າບ່ຽງ, ຜ້າປູໂຕະ, ຜ້າຮອງຈານ ແລະ ຜ້າຄາດຫົວ. ໂດຍການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊາຊົນບ້ານສາມກາງໂດຍສ່ວນໃຫຍ່ ແມ່ນຜະລິດແພຝ້າຍທົ່ວໄປ ມີຈຳນວນ 147 ຄອບຄົວ ຄິດເປັນ 23.03% ແລະ ກວມເອົາ 85.42% ຂອງຈຳນວນກຸ່ມຕົວຢ່າງທັງໝົດ, ຮອງລົງມາແມ່ນຜະລິດຜ້າພັນຄໍ ມີຈຳນວນ 129 ຄອບຄົວ ຄິດເປັນ 20.22% ແລະ ກວມເອົາ 75.00% ຂອງຈຳນວນກຸ່ມຕົວຢ່າງທັງໝົດ ແລະ ແພເສື້ອ ມີຈຳນວນ 75 ຄອບຄົວ ຄິດເປັນ 11.79% ແລະ ກວມເອົາ 43.75% ຂອງຈຳນວນກຸ່ມຕົວຢ່າງທັງໝົດ. ປະລິມານແຜ່ນແພທີ່ຜະລິດໄດ້ສະເລ່ຍຕໍ່ເດືອນແມ່ນ 76.5 ແມັດ/ຄອບຄົວ; ເຊິ່ງສ່ວນໃຫຍ່ແມ່ນສາມາດຜະລິດໄດ້ຫຼາຍກວ່າ 90 ແມັດ ມີຈຳນວນ 111 ຄອບຄົວ ກວມເອົາ 64.58%, ຮອງລົງມາແມ່ນສາມາດຜະລິດໄດ້ຢູ່ລະຫວ່າງ 70.01 - 90 ແມັດ ມີຈຳນວນ 22 ຄອບຄົວ ກວມເອົາ 12.50% ແລະ ຜະລິດໄດ້ໜ້ອຍກວ່າ 30 ແມັດ ມີຈຳນວນ 18 ຄອບຄົວ ກວມເອົາ 10.42% ຕາມລຳດັບ. ໂດຍເວລາທີ່ໃຊ້ໃນການຕ່ຳແຜ່ນແພ 1 ແມັດ ໂດຍສ່ວນໃຫຍ່ແມ່ນໜ້ອຍກວ່າ 1.00 ມື້ ມີຈຳນວນ 115 ຄອບຄົວ ກວມເອົາ 66.67%, ຮອງລົງມາແມ່ນຢູ່ລະຫວ່າງ 1.00 – 2.00 ມື້ ມີຈຳນວນ 32 ຄອບຄົວ ກວມເອົາ 18.75% ແລະ ຢູ່ລະຫວ່າງ 2.01 – 3.00 ມື້ ມີຈຳນວນ 22 ຄອບຄົວ ກວມເອົາ 12.50% ຕາມລຳດັບ. ສຳລັບ ເສັ້ນຝ້າຍ ຫຼື ເສັ້ນທີ່ໃຊ້ໃນການຕ່ຳແຜ່ນ ໂດຍສ່ວນໃຫຍ່ແມ່ນຊື້ຈາກຜູ້ຜະລິດວັດຖຸດິບຄົນອື່ນ ມີຈຳນວນ 118 ຄອບຄົວ ກວມເອົາ 68.75% ເຊິ່ງໃນນັ້ນ ແມ່ນມີການຊື້ຢູ່ພາຍໃນທ້ອງຖິ່ນມີຈຳນວນ 86 ຄອບຄົວ ກວມເອົາ 72.73%, ຊື້ມາຈາກຕ່າງແຂວງ ຈຳນວນ 25 ຄອບຄົວ ກວມເອົາ 21.21%, ແລະ ຊື້ມາຈາກຕ່າງປະເທດ ຈຳນວນ 7 ຄອບຄົວ ກວມເອົາ 6.06% ຕາມລຳດັບ; ສ່ວນສຳລັບ ຄອບຄົວທີ່ມີການຜະລິດເສັ້ນຝ້າຍ ຫຼື ເສັ້ນໄໝເອງ ມີຈຳນວນ 54 ຄອບຄົວ ກວມເອົາ 31.25% ເທົ່ານັ້ນ. ການຍ້ອມສີເສັ້ນຝ້າຍ ຫຼື ເສັ້ນໄໝ ໂດຍສ່ວນໃຫຍ່ແມ່ນໃຊ້ສີທຳມະຊາດ ມີຈຳນວນ 136 ຄອບຄົວ ກວມເອົາ 79.17%, ໃຊ້ສີເຄມີ ມີຈຳນວນ 18 ຄອບຄົວ ກວມເອົາ 10.42% ແລະ ໃຊ້ທັງສີທຳມະຊາດ ແລະ ສີເຄມີ ມີຈຳນວນ 18 ຄອບຄົວ ກວມເອົາ 10.42% ຕາມລຳດັບ. ຕົ້ນທຶນທີ່ໃຊ້ໃນການຜະລິດຫັດຖະກຳຕ່ຳແຜ່ນແຕ່ລະຄັ້ງສະເລ່ຍ 3,396,000 ກີບ/ຄອບຄົວ; ເຊິ່ງຕົ້ນທຶນທີ່ໃຊ້ໂດຍສ່ວນໃຫຍ່ແມ່ນຢູ່ລະຫວ່າງ 2,000,000 – 4,000,000 ກີບ ມີຈຳນວນ 86 ຄອບຄົວ ກວມເອົາ 50.00%, ຮອງລົງມາແມ່ນໜ້ອຍກວ່າ 2,000,000 ກີບ ມີຈຳນວນ 47 ຄອບຄົວ ກວມເອົາ 27.08% ແລະ ຢູ່ລະຫວ່າງ 4,000,001 – 6,000,000 ກີບ ມີຈຳນວນ 25 ຄອບຄົວ ກວມເອົາ 14.58% ຕາມລຳດັບ; ແຫຼ່ງທີ່ມາຂອງເງິນທຶນທີ່ໃຊ້ໃນການຕ່ຳແຜ່ນແພ ໂດຍສ່ວນໃຫຍ່ແມ່ນໃຊ້ທຶນຕົນເອງ ມີຈຳນວນ 168 ຄອບຄົວ ຄິດເປັນ 70.00% ແລະ ກວມເອົາ 97.67% ຂອງກຸ່ມຕົວຢ່າງທັງໝົດ; ຮອງລົງມາແມ່ນທຶນສະໜັບສະໜູນຈາກໂຄງການ ມີຈຳນວນ 54 ຄອບຄົວ ຄິດເປັນ 22.50% ແລະ ກວມເອົາ 31.40% ຂອງກຸ່ມຕົວຢ່າງທັງໝົດ; ກູ້ຢືມຈາກສະຖາບັນການເງິນ/ທະນາຄານ ມີຈຳນວນ 11 ຄອບຄົວ ຄິດເປັນ 4.58% ແລະ ກວມເອົາ 6.40% ຂອງກຸ່ມຕົວຢ່າງທັງໝົດ ແລະ ກູ້ຢືມຈາກຍາດພີ່ນ້ອງ ມີຈຳນວນ 7 ຄອບຄົວ ຄິດເປັນ 2.92% ແລະ ກວມເອົາ 4.07% ຂອງກຸ່ມຕົວຢ່າງທັງໝົດ; ປະລິມານການຜະລິດຫັດຖະກຳຕ່ຳແຜ່ນພາຍໃນຄອບຄົວ ແມ່ນຜະລິດຕາມການສັ່ງຊື້ຂອງລູກຄ້າເປັນຫຼັກ ມີຈຳນວນ 1 ຄອບຄົວ ກວມເອົາ 52.08% ແລະ ຜະລິດຕາມຄວາມສາມາດຂອງຄົນໃນຄອບຄົວ ມີຈຳນວນ 82 ຄອບຄົວ ກວມເອົາ 47.92%; ເຊິ່ງການຈັດຈຳໜ່າຍ ຫຼື ຂາຍຜະລິດຕະພັນ ໂດຍສ່ວນໃຫຍ່ແມ່ນຂາຍກັບທີ່ຢູ່ເຮືອນ ມີຈຳນວນ 136 ຄອບຄົວ ຄິດເປັນ 39.13% ແລະ ກວມເອົາ 79.17% ຂອງຈຳນວນກຸ່ມຕົວຢ່າງທັງໝົດ, ຮອງລົງມາແມ່ນຂາຍຕາມທ້ອງຕະຫຼາດທົ່ວໄປ ມີຈຳນວນ 100 ຄອບຄົວ ຄິດເປັນ 28.83% ແລະ ກວມເອົາ 58.33% ຂອງຈຳນວນກຸ່ມຕົວຢ່າງທັງໝົດ, ຂາຍຢູ່ສູນຫັດຖະກຳ ມີຈຳນວນ 39 ຄອບຄົວ ຄິດເປັນ 11.33% ແລະ ກວມເອົາ 22.92% ຂອງຈຳນວນກຸ່ມຕົວຢ່າງທັງໝົດ, ສົ່ງອອກຕ່າງແຂວງ ມີຈຳນວນ 36 ຄອບຄົວ ຄິດເປັນ 10.30% ແລະ ກວມເອົາ 20.83% ຂອງຈຳນວນກຸ່ມຕົວຢ່າງທັງໝົດ, ສົ່ງອອກຕ່າງເມືອງ ມີຈຳນວນ 32 ຄອບຄົວ ຄິດເປັນ 9.27% ແລະ ກວມເອົາ 18.75% ຂອງຈຳນວນກຸ່ມຕົວຢ່າງທັງໝົດ, ສົ່ງອອກໄປຕ່າງປະເທດ ມີພຽງ 4 ຄອບຄົວ ຄິດເປັນ 1.03% ແລະ ກວມເອົາ 2.08% ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

ຄວາມສຳພັນຂອງປັດໄຈທີ່ສົ່ງຜົນຕໍ່ການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊມີດັ່ງນີ້:

ຕາຕະລາງ 2: ຜົນການທົດສອບຄວາມສຳພັນຂອງປັດໄຈທີ່ສົ່ງຜົນຕໍ່ການຜະລິດຫັດຖະກຳຕ່ຳແຜ່ນ

Coefficients[a]

Model		Unstandardized Coefficients		Standardized Coefficients	t	Sig.
		B	Std. Error	Beta		
1	(Constant)	-9.658	3.743		-2.580	0.015
	X1	-0.075	0.081	-0.094	-0.932	0.358

X2	-0.173	0.160	-0.142	-1.079	0.289
X3	-0.126	0.151	-0.120	-0.832	0.411
X4	0.108	0.156	0.090	0.692	0.494
X5	0.323	0.286	0.159	1.129	0.267
X6	4.971	1.224	2.577	4.060***	0.000
X7	-3.638	0.988	-2.029	-3.681***	0.001
X8	-1.095	0.305	-0.713	-3.596***	0.001
X9	-0.025	0.361	-0.006	-0.069	0.945
X10	-0.638	0.129	-0.487	-4.952***	0.000
X11	0.776	0.358	0.316	2.169**	0.038
X12	-0.511	0.365	-0.261	-1.403	0.170
X13	0.383	0.307	0.190	1.246	0.222
X14	0.034	0.171	0.026	0.201	0.842
X15	0.624	0.228	0.412	2.736**	0.010

R = 0.904, R Square = 0.816, Adjusted R Square = 0.730, Durbin-Watson = 1.753

Sum of Squares = 59.763, F = 9.482, Sig = 0.000

a. Dependent Variable: LnY

ທີ່ມາ: ການວິເຄາະດ້ວຍໂປຣແກມວິເຄາະຂໍ້ມູນທາງສະຖິຕິ

ເຫັນໄດ້ວ່າ ຄ່າສະຖິຕິທົດສອບບັນຫາຄວາມຄາດເຄື່ອນແຕ່ລະຄ່າມີຄວາມເປັນອິດສະຫຼະຕໍ່ກັນດ້ວຍວິທີ Durbin-Watson Statistic ພົບວ່າຄ່າ Durbin-Watson = 1.753 ເຊິ່ງມີຄ່າຢູ່ລະຫວ່າງເກນ 1.5-2.5 (ເຂົ້າໃກ້ 2) ສະແດງວ່າຄວາມຄາດເຄື່ອນແຕ່ລະຄ່າມີຄວາມເປັນອິດສະຫຼະຕໍ່ກັນ ຫຼື ບໍ່ມີຄວາມສຳພັນກັນເອງຂອງຕົວຄາດເຄື່ອນ ຈຶ່ງບໍ່ເຮັດໃຫ້ເກີດບັນຫາ Autocorrelation ແລະ ຜ່ານການທົດສອບຄ່າສະຖິຕິທົດສອບ ANOVA ຫຼື ການທົດສອບຄວາມແປປວນຂອງຕົວປ່ຽນ (F = 9.482) ແລະ ມີລະດັບຄວາມສຳຄັນທາງສະຖິຕິ (Sig = 0.000) ສະແດງວ່າ: ແບບຈຳລອງປັດໄຈທີ່ສົ່ງຜົນຕໍ່ການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ແມ່ນສາມາດນຳໃຊ້ໄດ້ ແລະ ຂຶ້ນຢູ່ກັບປັດໄຈທີ່ກຳນົດມາຢ່າງໜ້ອຍ 1 ປັດໄຈ. ເຊິ່ງຜ່ານການກວດສອບຄຸນສົມບັດຂອງແບບຈຳລອງພົບວ່າ ຄ່າສຳປະສິດ R-Square = 0.816 ເຊິ່ງໝາຍຄວາມວ່າ ຕົວປ່ຽນອິດສະຫຼະຄື: ລາຍໄດ້ຈາກການຜະລິດຫັດຖະກຳ, ລາຍຈ່າຍ ຫຼື ຕົ້ນທຶນໃນການຜະລິດຫັດຖະກຳຕ່ຳແຜ່ນ, ລາຍໄດ້ຈາກແຫຼ່ງອື່ນໆທີ່ບໍ່ແມ່ນມາຈາກການຜະລິດຫັດຖະກຳຕ່ຳແຜ່ນ, ຈຳນວນມື້ໃນການຜະລິດຫັດຖະກຳຕ່ຳແຜ່ນ, ປັດໄຈດ້ານທ່າແຮງການຜະລິດ, ປັດໄຈດ້ານເທັກນິກ ສາມາດອະທິບາຍຕົວປ່ຽນຕາມ ຜະລິດຕະພາບດ້ານການຜະລິດກະສິກຳຂອງ ສປປ ລາວ ທີ່ກຳນົດຂຶ້ນມາໃນໄລຍະຍາວໄດ້ເຖິງ 81.60%, ສ່ວນທີ່ເຫຼືອແມ່ນຂຶ້ນຢູ່ກັບປັດໄຈອື່ນໆທີ່ບໍ່ໄດ້ນຳເຂົ້າມາສຶກສາ.

ເຊິ່ງສາມາດນຳມາສ້າງແບບຈຳລອງຄວາມສຳພັນທາງດ້ານເສດຖະມິຕິໄດ້ດັ່ງນີ້:

$$Y = -9.658 + 4.971\ X_6 - 3.638\ X_7 - 1.095\ X_8 - 0.638\ X_{10} + 0.776\ X_{11} + 0.624\ X_{15}$$

$$(-2.580)^{**}\ (4.060)^{***}\ (-3.681)^{***}\ (-3.596)^{***}\ (-4.952)^{***}\ (2.169)^{**}\ (2.736)^{**}$$

ຕົວເລກໃນວົງເລັບເປັນຄ່າສະຖິຕິ t-statistic

*** ແທນໃຫ້ລະດັບຄວາມສຳຄັນທາງສະຖິຕິ 0.01

** ແທນໃຫ້ລະດັບຄວາມສຳຄັນທາງສະຖິຕິ 0.05

ຈາກແບບຈຳລອງຂ້າງເທິງ ສາມາດອະທິບາຍຜົນຂອງການທົດສອບຄວາມແຕກຕ່າງຄ່າສະເລ່ຍຂອງຕົວປ່ຽນ ດ້ວຍສະຖິຕິທົດສອບ (t-test) ສາມາດອະທິບາຍຜົນໄດ້ດັ່ງນີ້:

1. ລາຍໄດ້ຈາກການຜະລິດຫັດຖະກຳ (X_6) ມີຄວາມສຳພັນໃນທິດທາງດຽວກັນກັບການຜະລິດຫັດຖະກຳຕ່ຳແຜ່ນ ນັ້ນຄື: ຖ້າລາຍໄດ້ຈາກການຜະລິດຫັດຖະກຳ ເພີ່ມຂຶ້ນ 1 ຫົວໜ່ວຍ ໂດຍກຳນົດໃຫ້ປັດໄຈອື່ນໆຄົງທີ່ ຈະສົ່ງຜົນເຮັດໃຫ້ການຜະລິດຫັດຖະກຳຕ່ຳແຜ່ນ ເພີ່ມຂຶ້ນ 4.971 ຫົວໜ່ວຍ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01.

2. ລາຍຈ່າຍ ຫຼື ຕົ້ນທຶນໃນການຜະລິດຫັດຖະກຳຕ່ຳແຜ່ນ (X_7) ມີຄວາມສຳພັນໃນທິດທາງກົງກັນຂ້າມກັບປະລິມານການຜະລິດຫັດຖະກຳຕ່ຳແຜ່ນ ນັ້ນຄື: ຖ້າລາຍຈ່າຍ ຫຼື ຕົ້ນທຶນໃນການຜະລິດຫັດຖະກຳຕ່ຳແຜ່ນ ເພີ່ມຂຶ້ນ 1 ຫົວໜ່ວຍ ໂດຍກຳນົດໃຫ້ປັດໄຈອື່ນໆຄົງທີ່ ຈະສົ່ງຜົນເຮັດໃຫ້ການຜະລິດຫັດຖະກຳຕ່ຳແຜ່ນ ລຸດລົງ 3.638 ຫົວໜ່ວຍ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01.

3. ລາຍໄດ້ຈາກແຫຼ່ງອື່ນໆທີ່ບໍ່ແມ່ນມາຈາກການຜະລິດຫັດຖະກຳຕ່ຳແຜ່ນ (X_8) ມີຄວາມສຳພັນໃນທິດທາງກົງກັນຂ້າມກັບປະລິມານການຜະລິດຫັດຖະກຳຕ່ຳແຜ່ນ ນັ້ນຄື: ຖ້າລາຍໄດ້ຈາກແຫຼ່ງອື່ນໆທີ່ບໍ່ແມ່ນມາຈາກການຜະລິດຫັດຖະກຳຕ່ຳແຜ່ນ ເພີ່ມຂຶ້ນ 1 ຫົວໜ່ວຍ ໂດຍກຳນົດໃຫ້ປັດໄຈອື່ນໆຄົງທີ່ ຈະສົ່ງຜົນເຮັດໃຫ້ການຜະລິດຫັດຖະກຳຕ່ຳແຜ່ນ ລຸດລົງ 1.095 ຫົວໜ່ວຍ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01.

4. ຈຳນວນມື້ໃນການຜະລິດຫັດຖະກຳຕ່ຳແຜ່ນ (X_{10}) ມີຄວາມສຳພັນໃນທິດທາງກົງກັນຂ້າມກັບປະລິມານການຜະລິດຫັດຖະກຳຕ່ຳແຜ່ນ ນັ້ນຄື: ຖ້າຈຳນວນມື້ໃນການຜະລິດຫັດຖະກຳຕ່ຳແຜ່ນ ເພີ່ມຂຶ້ນ 1 ຫົວໜ່ວຍ ໂດຍກຳນົດໃຫ້ປັດໄຈອື່ນໆຄົງທີ່ ຈະສົ່ງຜົນເຮັດ

ໃຫ້ປະລິມານແຜ່ນແພທີ່ຜະລິດໄດ້ ລຸດລົງ 0.638 ຫົວໜ່ວຍ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01.

5. ປັດໄຈດ້ານທ່າແຮງການຜະລິດ (X_{11}) ມີຄວາມສຳພັນໃນທິດທາງດຽວກັນກັບການຜະລິດຫັດຖະກຳຕ່ຳແຜ່ນ ນັ້ນຄື: ປັດໄຈດ້ານທ່າແຮງການຜະລິດ ເຊັ່ນ: ການຕ່ຳແຜ່ນເປັນການຜະລິດທີ່ໃຊ້ຕົ້ນທຶນບໍ່ຫຼາຍ, ຄົນໃນຄອບຄົວມີຄວາມຮູ້, ຄວາມຊຳນານໃນການຕ່ຳແຜ່ນ, ຈຳນວນເງິນທຶນໝຸນວຽນທີ່ໃຊ້ໃນການຜະລິດຫັດຖະກຳຕ່ຳແຜ່ນ, ເຄື່ອງມື ແລະ ອຸປະກອນທີ່ໃຊ້ມີລາຄາເໝາະສົມ ຈະສົ່ງຜົນເຮັດໃຫ້ການຜະລິດຫັດຖະກຳຕ່ຳແຜ່ນ ເພີ່ມຂຶ້ນ 0.776 ຫົວໜ່ວຍ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05.

6. ປັດໄຈດ້ານເທັກນິກ (X_{15}) ມີຄວາມສຳພັນໃນທິດທາງດຽວກັນກັບການຜະລິດຫັດຖະກຳຕ່ຳແຜ່ນ ນັ້ນຄື: ປັດໄຈດ້ານທ່າແຮງການຜະລິດ ເຊັ່ນ: ປະສົບການໃນການນຳໃຊ້ເຕັກນິກຮູບແບບໃໝ່ໃນຕ່ຳແຜ່ນ, ມີແຫຼ່ງຄວາມຮູ້ທາງເທັກນິກໃນການຕ່ຳແຜ່ນທີ່ຫຼາກຫຼາຍ, ການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບການຕ່ຳແຜ່ນມີຄວາມສະດວກ, ມີເຄື່ອງມື ແລະ ອຸປະກອນຊ່ວຍໃນການຕ່ຳແຜ່ນທີ່ທັນສະໄໝ ຈະສົ່ງຜົນເຮັດໃຫ້ການຜະລິດຫັດຖະກຳຕ່ຳແຜ່ນ ເພີ່ມຂຶ້ນ 0.624 ຫົວໜ່ວຍ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05.

4. ວິພາກຜົນ

ຜົນການສຶກສາສະພາບການຜະລິດຫັດຖະກຳຕ່ຳແຜ່ນເພື່ອເປັນສິນຄ້າຂອງປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ພົບວ່າ ການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊາຊົນໂດຍສ່ວນໃຫຍ່ແມ່ນຜະລິດເປັນອາຊີບເສີມ, ເຊິ່ງມີປະສົບການໃນການຜະລິດໂດຍສະເລ່ຍຢູ່ລະຫວ່າງ 5 ປີຂຶ້ນໄປ, ມີການຮຽນຮູ້ວິທີການໃນການຜະລິດຫັດຖະກຳຕ່ຳແຜ່ນທີ່ສືບທອດມາຈາກບັນພະບຸລຸດ, ຮຽນຮູ້ຈາກຍາດພີ່ນ້ອງ ແລະ ຈາກການຝຶກອົບຮົມຂອງໂຄງການກວມເອົາເປັນສ່ວນຫຼາຍ; ສຳລັບການອອກແບບ ຫຼື ລວດລາຍຂອງແຜ່ນແຜ ແມ່ນສືບທອດມາຈາກບັນພະບຸລຸດ, ຕາມການແນະນຳ ຫຼື ສັ່ງຊື້ຂອງລູກຄ້າ ແລະ ຄົ້ນຄິດຂຶ້ນມາໃໝ່ດ້ວຍຕົນເອງ. ເຊິ່ງປະເພດຂອງຜະລິດຕະພັນ ຈາກການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊົນປະກອບດ້ວຍ: ແພເສື່ອ, ແພຝ້າຍທົ່ວໄປ, ແພສົ້ນ, ຜ້າພັນຄໍ, ຜ້າບ່ຽງ, ຜ້າປູໂຕະ, ຜ້າຮອງຈານ ແລະ ຜ້າຄາດຫົວ. ໃນນັ້ນການຜະລິດຫັດຖະກຳຕ່ຳແຜ່ນຫຼັກໆ ແມ່ນຜະລິດແພຝ້າຍທົ່ວໄປ, ຜ້າພັນຄໍ ແລະ ແພເສື່ອ. ເຊິ່ງປະລິມານແຜ່ນແພທີ່ຜະລິດໄດ້ສະເລ່ຍຕໍ່ເດືອນແມ່ນ 76.5 ແມັດ/ຄອບຄົວ ແລະ ໃຊ້ເວລາໃນການຕ່ຳແຜ່ນແພໂດຍສະເລ່ຍ ໜ້ອຍກວ່າ 1 ມື້/ 1 ແມັດ. ວັດຖຸດິບ (ເສັ້ນຝ້າຍ ຫຼື ເສັ້ນໄໝ) ທີ່ໃຊ້ໃນການຕ່ຳແຜ່ນ ໂດຍສ່ວນໃຫຍ່ແມ່ນຊື້ຈາກຜູ້ຜະລິດວັດຖຸດິບຄົນອື່ນ ຢູ່ພາຍໃນທ້ອງຖິ່ນເປັນຫຼັກ ແລະ ຊື້ມາຈາກຕ່າງແຂວງ ແລະ ຊື້ມາຈາກຕ່າງປະເທດອີກຈຳນວນໜຶ່ງ. ການຍ້ອມສີເສັ້ນຝ້າຍ ຫຼື ເສັ້ນໄໝ ໂດຍສ່ວນໃຫຍ່ແມ່ນໃຊ້ສີທຳມະຊາດ ແລະ ໃຊ້ສີເຄມີ ມີພຽງເຫຼັກນ້ອຍ; ຕົ້ນທຶນທີ່ໃຊ້ໂດຍສະເລ່ຍ 3,396,000 ກີບ/ຄອບຄົວ; ແຫຼ່ງທີ່ມາຂອງເງິນທຶນທີ່ໃຊ້ໃນການຕ່ຳແຜ່ນແພ ໂດຍສ່ວນໃຫຍ່ແມ່ນໃຊ້ທຶນຕົນເອງ ແລະ ທຶນສະໜັບສະໜຸນຈາກໂຄງການ; ປະລິມານການຜະລິດຫັດຖະກຳຕ່ຳແຜ່ນພາຍໃນຄອບຄົວ ແມ່ນຜະລິດຕາມການສັ່ງຊື້ຂອງລູກຄ້າເປັນຫຼັກ ແລະ ຜະລິດຕາມຄວາມສາມາດຂອງຄົນໃນຄອບຄົວ; ເຊິ່ງການຈັດຈຳໜ່າຍ ຫຼື ຂາຍຜະລິດຕະພັນ ໂດຍສ່ວນໃຫຍ່ແມ່ນຂາຍກັບທີ່ຢູ່ເຮືອນ, ຂາຍຕາມທ້ອງຕະຫຼາດທົ່ວໄປ ແລະ ຂາຍຢູ່ສູນຫັດຖະກຳ, ສ່ວນການສົ່ງອອກຕ່າງເມືອງ, ຕ່າງແຂວງ ແລະ ຕ່າງປະເທດ ມີພຽງເລັກນ້ອຍເທົ່ານັ້ນ ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Silakul (2016) ທີ່ພົບວ່າ: ສ່ວນໃຫຍ່ເລືອກໃຊ້ເສັ້ນໄໝຈາກຜູ້ຜະລິດເສັ້ນໄໝໃນຊຸມຊົນ, ໄໝທີ່ໃຊ້ເປັນໄໝພັນພື້ນເມືອງ, ລາຍມັດໝີ່ທີ່ໄດ້ຮັບການສືບທອດມາຈາກບັນພະບຸລຸດ, ການມັດໝີ່ ແລະ ຍ້ອມສີຈະເຮັດດ້ວຍຕົນເອງ, ໃຊ້ສີເຄມີໃນການຍ້ອມເສັ້ນໄໝ, ປະສົບການໃນການຕ່ຳຜ້າຫຼາຍກວ່າ 10 ປີ, ລາຍຜ້າເປັນລວດລາຍພືດພັນດອກໄມ້, ຜ້າມັດໝີ່ທີ່ຕ່ຳໄດ້ຈະມີໄວ້ເພື່ອຂາຍ ແລະ ໃຊ້ໃນຄົວເຮືອນ ສ່ວນການຖ່າຍທອດຄວາມຮູ້ການຕ່ຳຜ້າຈະໃຊ້ວິທີການຖ່າຍທອດໂດຍການຊ່ວຍຝຶກໃຫ້ເຮັດ ແລະ ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Palatorn (1999) ທີ່ພົບວ່າ: ຜູ້ຜະລິດຫັດຖະກຳແຜ່ນແພມີປະສົບການໂດຍສະເລ່ຍ 5 ປີຂຶ້ນໄປ, ມີການຝຶກອົບຮົມການຕ່ຳຜ້າສະເລ່ຍ 4 ຄັ້ງ, ໃຊ້ເວລາໃນການຕ່ຳແຜ່ນ 1 ແມັດ ໜ້ອຍກວ່າໜຶ່ງວັນ, ສາມາດຜະລິດແຜ່ນແພສະເລ່ຍ 20.42 ແມັດ/ຄອບຄົວ/ປີ; ມີຕົ້ນທຶນສະເລ່ຍໃນການຕ່ຳແຜ່ນ 3,050,000 ກີບ/ຄອບຄົວ, ການຈັດຈຳໜ່າຍສ່ວນໃຫຍ່ແມ່ນຂາຍເອງພາຍໃນທ້ອງຖິ່ນ ແລະ ສົ່ງອອກຕ່າງປະເທດຈຳນວນເລັກນ້ອຍ.

ຜົນການທົດສອບປັດໄຈທີ່ສົ່ງຜົນຕໍ່ການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ພົບວ່າ: ລາຍໄດ້ຈາກການຜະລິດຫັດຖະກຳ, ປັດໄຈດ້ານທ່າແຮງການຜະລິດ ແລະ ປັດໄຈດ້ານເທັກນິກ ມີຄວາມສຳພັນໃນທິດທາງດຽວກັນກັບການຜະລິດຫັດຖະກຳຕ່ຳແຜ່ນ ຫຼື ສົ່ງຜົນເຮັດໃຫ້ການຜະລິດຫັດຖະກຳຕ່ຳແຜ່ນເພີ່ມຂຶ້ນ 4.971, 0.776 ແລະ 0.624 ຫົວໜ່ວຍ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05; ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Palatorn (1999) ທີ່ວ່າ: ລາຍໄດ້ຈາກການຜະລິດຫັດຖະກຳ, ປະສົບການໃນການຕ່ຳແຜ່ນ ແລະ ປະລິມານວັດຖຸດິບທີ່ໃຊ້ ມີຄວາມສຳພັນໃນທິດທາງດຽວກັນກັບປະລິມານການຜະລິດແຜ່ນແພ ດ້ວຍລະດັບຄວາມສຳຄັນສະຖິຕິ 0.05 ແລະ ຍັງສອດຄ່ອງກັບຜົນການສຶກສາຂອງ Soulinthongteng et al. (2025) ໃນດ້ານປັດໄຈດ້ານທ່າແຮງໃນການຜະລິດ ຈະສົ່ງຜົນຕໍ່ການແປຮູບສິນຄ້າຫຼາຍຂຶ້ນ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01. ສ່ວນລາຍຈ່າຍ ຫຼື ຕົ້ນທຶນໃນການຜະລິດຫັດຖະກຳຕ່ຳແຜ່ນ, ລາຍໄດ້ຈາກແຫຼ່ງອື່ນໆທີ່ບໍ່ແມ່ນມາຈາກການຜະລິດຫັດຖະກຳຕ່ຳແຜ່ນ ແລະ ຈຳນວນມື້ໃນການຜະລິດຫັດຖະກຳຕ່ຳແຜ່ນ ແມ່ນມີຄວາມສຳພັນໃນທິດທາງກົງກັນຂ້າມກັບປະລິມານການຜະລິດຫັດຖະກຳຕ່ຳແຜ່ນ ຫຼື ສົ່ງຜົນເຮັດໃຫ້ການຜະລິດຫັດຖະກຳຕ່ຳແຜ່ນລຸດລົງ 3.638, 1.095 ແລະ 0.638 ຫົວໜ່ວຍ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Jaisit & Chalermphol (2018) ທີ່ວ່າ: ປັດໄຈທີ່ມີຄວາມສຳພັນກັບຄວາມສຳເລັດຂອງຊາວກະສິກອນໃນການຜະລິດ ຜະລິດຕະພັນຜ້າຝ້າຍຕ່ຳດ້ວຍມືປະກອບດ້ວຍ ລະດັບການສຶກສາ ແລະ ເງິນທຶນຕໍ່ເດືອນ; ແຕ່ບໍ່ສອດຄ່ອງກັບຜົນການຄົ້ນຄວ້າ Palatorn (1999) ທີ່ວ່າ: ລາຍໄດ້ຈາກອາຊີບອື່ນທີ່ບໍ່ແມ່ນການຕ່ຳແຜ່ນ ແລະ ຈຳນວນມື້ທີ່ໃຊ້ໃນການຕ່ຳແຜ່ນ ແມ່ນມີຄວາມສຳພັນໃນທິດທາງດຽວກັນກັບປະລິມານການຜະລິແຜ່ນແພທີ່ຜະລິດໄດ້ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01.

5. ສະຫຼຸບ

ການຜະລິດຫັດຖະກຳຕ່ຳແຜ່ນເພື່ອເປັນສິນຄ້າຂອງປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ໂດຍສ່ວນໃຫຍ່ແມ່ນຜະລິດເປັນອາຊີບເສີມ ກວມເອົາ 70.83%; ເຊິ່ງມີປະສົບການໃນການຜະລິດໂດຍສະເລ່ຍຢູ່ລະຫວ່າງ 5-6 ປີ; ການຮຽນຮູ້ວິທີການໃນການຜະລິດຫັດຖະກຳຕ່ຳແຜ່ນຂອງຄອບຄົວ ໂດຍສ່ວນໃຫຍ່ແມ່ນສືບທອດມາຈາກບັນພະບຸລຸດ,ຈາກຍາດພີ່ນ້ອງ ແລະ ຈາກການຝຶກອົບຮົມຂອງໂຄງການ; ການອອກແບບ ຫຼື ລວດລາຍຂອງແຜ່ນແຜ ແມ່ນສືບທອດມາຈາກບັນພະບຸລຸດ, ຕາມການແນະນຳ ຫຼື ສັ່ງຊື້ຂອງລູກຄ້າ ແລະ ຄົ້ນຄິດຂຶ້ນມາໃໝ່ດ້ວຍຕົນເອງ. ສຳລັບປະເພດຂອງຜະລິດຕະພັນ ຈາກການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊົນປະກອບດ້ວຍ: ແພເສື້ອ, ແພຝ້າຍທໍ່ວໄປ, ແພສິ້ນ, ຜ້າພັນຄໍ, ຜ້າບ່ຽງ, ຜ້າປູໂຕະ, ຜ້າຮອງຈານ ແລະ ຜ້າຄາດຫົວ. ປະລິມານແຜ່ນແພທີ່ຜະລິດໄດ້ສະເລ່ຍຕໍ່ເດືອນແມ່ນ 76.5 ແມັດ/ຄອບຄົວ; ວັດຖຸດິບທີ່ໃຊ້ສຳລັບການຕ່ຳແຜ່ນ ໂດຍສ່ວນໃຫຍ່ແມ່ນຊື້ຈາກຜູ້ຜະລິດວັດຖຸດິບຄົນອື່ນຢູ່ພາຍໃນທ້ອງຖິ່ນ, ຕ່າງແຂວງ ແລະ ຊື້ມາຈາກຕ່າງປະເທດ. ການຍ້ອມສີເສັ້ນຝ້າຍ ຫຼື ເສັ້ນໄໝ ໂດຍສ່ວນໃຫຍ່ແມ່ນໃຊ້ສີທຳມະຊາດ; ເຊິ່ງການຈັດຈຳໜ່າຍ ຫຼື ຂາຍຜະລິດຕະພັນ ໂດຍສ່ວນໃຫຍ່ແມ່ນຂາຍກັບທີ່ຢູ່ເຮືອນ, ຂາຍຕາມທ້ອງຕະຫຼາດທໍ່ວໄປ, ສົ່ງອອກຕ່າງແຂວງ, ສົ່ງອອກຕ່າງເມືອງ ແລະ ສົ່ງອອກໄປຕ່າງປະເທດ. ສຳລັບປັດໄຈທີ່ສົ່ງຜົນຕໍ່ການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ປະກອບມີ 6 ປັດໄຈ ຄື: ລາຍໄດ້ຈາກການຜະລິດຫັດຖະກຳ, ປັດໄຈດ້ານທ່າແຮງການຜະລິດ ແລະ ປັດໄຈດ້ານເທັກນິກ, ລາຍຈ່າຍ ຫຼື ຕົ້ນທຶນໃນການຜະລິດຫັດຖະກຳຕ່ຳແຜ່ນ, ລາຍໄດ້ຈາກແຫຼ່ງອື່ນໆທີ່ບໍ່ແມ່ນມາຈາກການຜະລິດຫັດຖະກຳຕ່ຳແຜ່ນ ແລະ ຈຳນວນມື້ໃນການຜະລິດຫັດຖະກຳຕ່ຳແຜ່ນ. ເຊິ່ງການສຶກສາຫົວຂໍ້ນີ້ມີຄຸນຄ່າທັງດ້ານວິຊາການ ແລະ ດ້ານການນຳໃຊ້ຕົວຈິງ ເພາະຊ່ວຍໃຫ້ເຂົ້າໃຈປັດໄຈຕ່າງໆທີ່ກ່ຽວຂ້ອງກັບການຜະລິດຫັດຖະກຳຕ່ຳແຜ່ນເພື່ອເປັນສິນຄ້າຂອງປະຊາຊົນບ້ານສາມກາງ; ນອກຈາກນັ້ນ ຍັງສາມາດນຳຜົນການສຶກສາໄປໃຊ້ເປັນພື້ນຖານໃນການປັບປຸງການຜະລິດ ສົ່ງເສີມການຈຳໜ່າຍ ເພີ່ມມູນຄ່າໃຫ້ແກ່ຜະລິດຕະພັນ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນຢ່າງຍືນຍົງ. ແຕ່ເຖິງຢ່າງໃດກໍ່ຕາມການສຶກສານີ້ ມຸ່ງເນັ້ນສະເພາະປະຊາຊົນບ້ານສາມກາງ ເມືອງແບງ ແຂວງອຸດົມໄຊ ດັ່ງນັ້ນ ຜົນການສຶກສາອາດບໍ່ສາມາດນຳໄປອະທິບາຍສະພາບການຜະລິດຫັດຖະກຳຕ່ຳແຜ່ນຂອງປະຊາຊົນໃນບ້ານ ຫຼື ທ້ອງຖິ່ນອື່ນໆໄດ້ທັງໝົດ; ພ້ອມດຽວກັນນັ້ນ ຂໍ້ມູນບາງສ່ວນແມ່ນໄດ້ຈາກການຕອບຄຳຖາມຂອງຜູ້ຜະລິດ ເຊິ່ງອາດມີຄວາມຄາດເຄື່ອນຈາກຄວາມຊົງຈຳ ຫຼື ຄວາມເຂົ້າໃຈຂອງຜູ້ໃຫ້ຂໍ້ມູນ.

6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຄົນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

7. ເອກະສານອ້າງອີງ

Chemsripong, S., & Petmee, P. (2017). Creating value added products from local wisdom: A case study of the ancient cloth. *Journal of community development research (Humanities and Social sciences), 10*(4), 62-84

Industry and Commerce Department. (2025). *Summary report 2025*. Industry and Commerce Department of Oudomxay Province.

Industry and Commerce Office. (2025). *Socio-economic development plan 2024-2025 report*. Industry and Commerce Office of Beng District.

Jaisit, A., & Chalermphol, J. (2018). Factors Related to Farmer Success in Producing Handmade Cotton Weaving Products in Don Luang Village, Mae Raeng Subdistrict, Pa Sang District, Lamphun Province. *Journal of Community Development and Quality of Life 6*(3): 623 - 630

Na-Thalang, E. (1998). *Wisdom and the learning process of Thailand*. Sukhothai Thammathirat Open University.

Palatorn, C. (1999). *Factors affecting traditional weaving in Na Kho Ruea Sub-district, Hot District, Chiang Mai Province* [Unpublished master's dissertation]. Maejo University.

Phanak, R. (2023). The development cotton processing local wisdom based on sufficiency economy and creative economy in Sap Yai district Chaiyaphum province. *MCU Ubonratchathani Journal of Buddhist Studies. 5*(2). 363-370

Piamsuwannakit, S. (2024). Guidelines for Adding Value to Tai Lue Woven Fabric Products from Ban Sri Don Chai based on the Concept of a Creative Economy. *Business administration and Economics review. 20*(2). 110-130

Rojanaporntip, V. (2005). *The relationship between community identity and tourism development in Samphanthawong district* [Unpublished master's dissertation]. Chulalongkorn University.

Sakda, P. (2016). *The Community Product Development Based-on Handicraft Local Wisdom of Ban Bang Wuay, BangPla Sub-District Bang Len District Nakhon Pathom Province* [Unpublished master's dissertation]. Rajamangala University of Technology Rattanakosin.

Silakul, W. (2016). Factors affecting the operation of the ikat silk weaving groups in Khon Kaen Province. *Dhammathas Academic Journal*, *16*(2), 13–22. https://so06.tci-thaijo.org/index.php/dhammathas/article/view/78793

Soulinthongteng, G., Siphanthong, B., & SIOUDOMPHAN, S. (2025). Factors Influencing the Decision to Transform Bamboo into Products for the People of Houaphanh Province. *Souphanouvong University Journal Multidisciplinary Research and*

Development, *11*(2), 57–63. https://doi.org/10.69692/SUJMRD110257

Wasi, P. (2000). *Quality culture: Critical problems in the rural side to survive*. Bangkok: Moo Ban Printing Press.

Yamane, T. (1973). *Statistics: An introductory analysis* (3rd ed.). Harper & Row.